ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 05 ທຄຕລ 2014
ນະຄອນຫຼວງວຽງຈັນ, ວັນທີ: 26 FEB 2014

# ແຈ້ງການ

- ອີງຕາມໜັງສືແຈ້ງຈາກ COFIBRED ລົງວັນທີ 25/02/2014.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ມີຈຸດປະສົງຂໍແຈ້ງມາຍັງຜູ້ຖືຮຸ້ນຂອງ ທຄຕລ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບທົ່ວເຖິງກັນວ່າ: ສະມາຊິກສະພາບໍລິຫານຂອງ ທຄຕລ ຜູ້ທີ່ຕາງໜ້າຈາກຄູ່ຮ່ວມຍຸດທະສາດ ຂອງ ທຄຕລ Compagie Financiere De La BRED (COFIBRED) ໄດ້ມີການປ່ຽນແປງຈາກເມື່ອກ່ອນແມ່ນ MR. Yves JACQUOT ມາເປັນ MR. Vincent GROS, ໂດຍມີຜົນສັກສິດນັບແຕ່ວັນທີ 25/02/2014 ເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານຊາບ.

ຜູ້ອຳນວຍການໃຫຍ່
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ອ່ອນແກ້ວ ດາລາວົງ

**ຊື່ ແລະ ນາມສະກຸນ** **ແວງຊັງ ໂກຣ**



ເກີດເມື່ອວັນທີ 25 ສິງຫາ 1964

ທີ່ຢູ່: 39 ຖະໜົນ Raspail, 75007, ປາຣີ

**ຕຳແໜ່ງ: ເລຂາທິການ**

**ປະຫວັດຫຍໍ້**

ມີປະສົບການຫຼາຍກວ່າ 25 ປີ ໃນຂົງເຂດທະນາຄານເພື່ອການລົງທຶນ, ທ່ານ ແວງຊັງ ໂກຣ ເລີ່ມເຮັດວຽກດ້ວຍການເປັນນັກກວດສອບບັນຊີຢູ່ທີ່ Societe Generale, ຈາກນັ້ນກໍຮັບຜິດຊອບວຽກທຸລະກຳຕະຫຼາດທຶນໃນ Societe Generale ທີ່ນິວຢອກ ສະຫະລັດອາເມລິກາ, ແລະ ຍ້າຍໄປປະຈຳການ ທີ່ເມືອງໂຕກຽວ ປະເທດຍີ່ປຸ່ນ ໃນຕຳແໜ່ງຜູ້ອຳນວຍການດ້ານການດຳເນີນງານ, ຮັບຜິດຊອບວຽກງານສະໜັບສະໜູນການດຳເນີນງານ.

2002-2007 ຮັບຜິດຊອບບໍລິສັດ EuroClear France ໃນຕຳແໜ່ງຮອງຜູ້ອຳນວຍການໃຫຍ່. 2007-2012, ເຮັດວຽກກັບ LCH CLEARNET SA, ໃນຕຳແໜ່ງຮອງເລຂາທິການ ຮັບຜິດຊອບວຽກບໍລິຫານທຶນ ແລະ ຄຸ້ມຄອງຄວາມສ່ຽງ.

ທ່ານ ແວງຊັງ ໂກຣ ໄດ້ມາເຮັດໃຫ້ທະນາຄານ Bred Banque Populaire ໃນປີ 2013, ໃນຕຳແໜ່ງເລຂາທິການ, ແລະ ສະມາຊິກຄະນະກຳມະການບໍລິຫານ (COMEX).

**ການສຶກສາ:**

ມະຫາວິທະຍາໄລ Reading, ຫຼັກສູດ Henley Leadership Programme, ໂຮງຮຽນບໍລິຫານທຸລະກິດ Henley (2009)

ETS Europe, TOEIC (ສອບເສັງພາສາອັງກິດສຳລັບການສື່ສານສາກົນ) ໄດ້ຄະແນນ 985/990

ມະຫາວິທະຍາໄລ Paris Val De Marne, ຫຼັກສູດປະລິນຍາຕຣີເສດຖະສາດ (Licence de Sciences Economiques (1987)

ສະຖາບັນ Sciences Po Paris, ປະລິນຍາໂທດ້ານ Public Affairs (1986)

**ປະສົບການການເຮັດວຽກ**

2013 ທະນາຄານ Bred Banque Populaire, ເລຂາທິການ, ແລະ ສະມາຊິກຄະນະກຳມະການບໍລິຫານ

2007-2002 ບໍລິສັດ LCH CLEARNET SA, ເລຂາທິການ, ຫົວໜ້າຄຸ້ມຄອງຄວາມສ່ຽງ.

2002-2007 ບໍລິສັດ EuroClear France, ຮອງຜູ້ອຳນວຍການໃຫຍ່.

1998-2002 ທະນາຄານ Societe Generale, ເມືອງໂຕກຽວປະເທດຍີ່ປຸ່ນ, ຜູ້ອຳນວຍການດ້ານການດຳເນີນງານ

1994-1998 ທະນາຄານ Societe Generale, ເມືອງນິວຢອກ ສະຫະລັດອາເມລິກາ, ພະນັກງານດຳເນີນງານ

**ພາສາ**

ຝຣັ່ງ (ພາສາແມ່)

ອັງກິດ (ດີ)

ຍີ່ປຸ່ນ (ພໍໃຊ້)